ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0493/ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ..13..MAR 2009

## ຄຳສັ່ງແນະນຳ

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ : ໃຫ້ຄຸ້ມຄອງລາຄາ ໝູ ແລະ ຊີ້ນໝູ ດ້ວຍການກຳນົດໂຄງສ້າງລາຄາ ໃນແຕ່ລະຂອດ (ລ້ຽງ, ນາຍຮ້ອຍ ແລະ ລູກຊຽງ).

- ອີງຕາມ ດຳລັດ ສະບັບເລກທີ 207/ນຍ, ລົງວັນທີ 11/10/2001, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ
- ອີງຕາມ ຄຳສັ່ງແນະນຳ ສະບັບເລກທີ 334/ກຄ.ພນ, ລົງວັນທີ 22/03/2002, ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ.
- ອີງຕາມທິດຊີ້ນຳຂອງຄະນະນຳກະຊວງ ໃນຄັ້ງວັນທີ 10/02/2009 ຕໍ່ບົດລາຍງານການຄົ້ນຄວ້າການກຳນົດໂຄງສ້າງລາຄາໝູ ຢູ່ນະຄອນຫຼວງວຽງຈັນ.

ເພື່ອເຮັດໃຫ້ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າໃນທົ່ວປະເທດເຂົ້າສູ່ລະບົບ ແລະ ລະບຽບການທີ່ລັດວາງອອກ, ໂດຍສະເພາະແມ່ນສິນຄ້າທີ່ລັດຄຸ້ມຄອງ ແລະ ມີຜົນກະທົບໄວ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຮັກສາ 03 ຜົນປະໂຫຍດລວມ ເຊັ່ນ : ຜູ້ປະກອບການ, ຜູ້ບໍລິໂພກ ແລະ ຜົນປະໂຫຍດຂອງລັດ, ແນໃສ່ ເພື່ອຊຸກຍູ້ ສົ່ງເສີມ ການຜະລິດພາຍໃນໃຫ້ເຂັ້ມແຂງ ທັງທາງດ້ານປະລິມານ, ຄຸນນະພາບ ແລະ ລາຄາ ໂດຍສະເພາະແມ່ນປະເພດສະບຽງອາຫານ ບົນພື້ນຖານການແຂ່ງຂັນ ທີ່ຖືກຕ້ອງຕາມລະບຽບກົດໝາຍ, ບໍ່ໃຫ້ຖືກເອົາລັດເອົາປຽບຈາກ ພໍ່/ແມ່ ຄ້າມີກາງ ໂດຍບໍ່ສົມເຫດສົມຜົນ.

### ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງດັ່ງນີ້ :

1- ໃຫ້ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຂະແໜງກະສິກຳ... ເພື່ອພ້ອມກັນຄົ້ນຄວ້າ ຂໍທິດຊີ້ນຳຈາກເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ໃນການລົງເກັບກຳຂໍ້ມູນ, ຕິດຕາມ, ກວດກາ ສະພາບການປ່ຽນແປງ ຂອງລາຄາໝູ, ເພື່ອກຳນົດລາຄາໃຫ້ເໝາະສົມໃນແຕ່ລະຄັ້ງ ເວລາທີ່ລາຄາມີການປ່ຽນແປງ.

2- ເພື່ອຮັບປະກັນໃຫ້ ລາຄາໝູ/ຊີ້ນໝູ ເປັນລະບົບ ໄປຕາມກົນໄກຕະຫຼາດ ແລະ ສົມເຫດສົມຜົນໃນທ້ອງຕະຫຼາດ ; ການກຳນົດລາຄາໝູ/ຊີ້ນໝູ ໃນແຕ່ລະຄັ້ງຢູ່ແຕ່ລະຂອດ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າເປັນໃຈກາງໃນການຄິດໄລ່ ໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມເງື່ອນໄຂ ແລະ ໂຄງສ້າງລາຄາຂອງແຕ່ລະຂອດ ( ມີເອກະສານຊ້ອນທ້າຍຕົວຢ່າງຄັດຕິດມາພ້ອມ ) ໂດຍອີງໃສ່ສະພາບຂໍ້ມູນຕົວຈິງຂອງແຕ່ລະແຂວງເປັນພື້ນຖານໃນການຄິດໄລ່.

3- ເພື່ອເຮັດໃຫ້ການຄິດໄລ່ ລາຄາໝູ/ຊີ້ນໝູ ເຂົ້າສູ່ລະບົບ ແລະ ສອດຄ່ອງກັບຕົວຈິງ ຕາມກົນໄກຕະຫຼາດໃນແຕ່ລະໄລຍະ, ການກຳນົດລາຄາໝູໃນແຕ່ລະຂອດ ບໍ່ວ່າໝູຈະມີນ້ຳໜັກ 100 ກລ, 90 ກລ ຫຼື 80 ກລ ກໍຕາມ, ການຄິດໄລ່ໃຫ້ຈັດຕັ້ງປະຕິບັດດັ່ງນີ້ :

- **<u>ລາຄາຢູ່ຂອດລ້ຽງ</u>**: ໃຫ້ກຳນົດຄວາມສ່ຽງບໍ່ເກີນ 2% ; ກຳໄລບໍ່ເກີນ 3.5% ຂອງລາຄາຕົ້ນທຶນ ເພື່ອກຳນົດລາຄາຂາຍໝູເປັນຢູ່ໜ້າຟາມ.
- **<u>ລາຄາຢູ່ຂອດນາຍຮ້ອຍ</u>**: ໃຫ້ກຳນົດກຳໄລບໍ່ເກີນ 2% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາຊີ້ນໝູລວມ ທີ່ສົ່ງໃຫ້ລູກຄ້າຢູ່ຕະຫຼາດ.
- **<u>ລາຄາຢູ່ຂອດລູກຄ້າ</u>**: ໃຫ້ກຳນົດກຳໄລບໍ່ເກີນ 3% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາຊີ້ນໝູລວມ ທີ່ພ້ອມຈະຂາຍຍ່ອຍໃຫ້ຜູ້ບໍລິໂພກ. ຖ້າໄດ້ແຍກປະເພດຊີ້ນອອກລະອຽດແລ້ວ, ລາຄາຈະມີຄວາມແຕກຕ່າງກັນໄປຕາມແຕ່ລະປະເພດຂອງຊີ້ນ ແລະ ຊີ້ນສ່ວນອື່ນໆ ຕາມອັດຕາສ່ວນຂອງມັນ (ມີຕົວຢ່າງການຄິດໄລ່ **ລາຄາຊີ້ນໝູ ແລະ ສ່ວນອື່ນຂອງມັນ ຢູ່ຕາຕະລາງ 4 ທີ່ຄັດຕິດມາພ້ອມນີ້, ລາຄາຊີ້ນຢູ່ນະຄອນຫຼວງວຽງຈັນ).**

4- ເຜີຍແຜ່ ແລະ ຊີ້ນຳບັນດາຜູ້ປະກອບການຢູ່ແຕ່ລະຂອດ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນຂອດທີ່ຕົນຮັບຜິດຊອບຢ່າງເປັນເຈົ້າການ. ກ່ອນລາຄາໝູຈະມີການປ່ຽນແປງ ຂຶ້ນ/ລົງ ໃນແຕ່ລະຄັ້ງ , ຜູ້ປະກອບການຕ້ອງສະເໜີການປ່ຽນແປງຂອງລາຄາດັ່ງກ່າວ ເຖິງຂະແໜງການທີ່ກ່ຽວຂ້ອງຂອງລັດຊາບ ເພື່ອຮັບຮອງ ແລະ ອະນຸມັດໃຫ້ກ່ອນຈຶ່ງຈະປະຕິ ບັດລາຄາໃໝ່ໄດ້.

5- ຖ້າພົບເຫັນບຸກຄົນ ຫຼື ຫົວໜ່ວຍທຸລະກິດໃດຝ່າຝືນ ບໍ່ປະຕິບັດຕາມຄຳສັ່ງສະບັບນີ້ ໃຫ້ໃຊ້ມາດຕະການຕໍ່ຜູ້ລະເມີດດັ່ງກ່າວ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ.ລາວວາງອອກຢ່າງເຂັ້ມງວດ.

6- ມາດຕະການຕໍ່ຜູ້ລະເມີດ ຕໍ່ການສວຍໂອກາດ ຂຶ້ນລາຄາ (ໝູ/ຊີ້ນໝູ) ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການຂອງລັດທີ່ກ່ຽວຂ້ອງກ່ອນ ແມ່ນໃຫ້ປະຕິບັດດັ່ງນີ້ :

**- ຄັ້ງທີໜຶ່ງ** : ແມ່ນໃຫ້ຕັກເຕືອນ ພ້ອມທັງເຮັດບັນທຶກຮັບຮູ້ຄວາມຜິດໄວ້.

**- ຄັ້ງທີສອງ** : ແມ່ນໃຫ້ປະຕິບັດມາດຕະການ ທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 7, ມາດຕາ 147.

7- ຖ້າການລະເມີດຫາກເກີດຂຶ້ນຈາກພະນັກງານລັດຜູ້ໃດຜູ້ໜຶ່ງ,ໂດຍການກະທຳທີ່ບົກພ່ອງ ຫຼື ນຳພາໄປໃນທາງທີ່ຜິດ ແມ່ນໃຫ້ປະຕິບັດວິໄນຕໍ່ບຸກຄົນດັ່ງກ່າວຢ່າງເຂັ້ມງວດ ຕາມທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 8 ຕາມແຕ່ລະກໍລະນີ.

8- ໃຫ້ທຸກພາກສ່ວນພ້ອມກັນຈັດຕັ້ງປະຕິບັດ ຕາມພາລະບົດບາດຂອງໃຜລາວຢ່າງເຄັ່ງຄັດ ເພື່ອໃຫ້ໄດ້ຮັບປະສິດທິຜົນດີ ແລ້ວລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ຫຼື ສາຍຕັ້ງຂອງຕົນຊາບທຸກຄັ້ງທີ່ມີການປ່ຽນແປງລາຄາ.

9- ຄຳສັ່ງແນະນຳສະສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ,

**<u>ສຳເນົາສົ່ງ</u>** :

- ລັດຖະມົນຕີຊ່ວຍວ່າການ ກະຊວງ ອຄ 02 ສະບັບ " ເພື່ອຊາບ "
- ຫົວໜ້າຫ້ອງການ ກະຊວງ ອຄ " ເພື່ອຊາບ "
- ກົມການຄ້າພາຍໃນ " ເພື່ອຕິດຕາມ ແລະ ກວດກາ "
- ສຳເນົາ.

ດຣ. ນາມ ວິຍະເກດ